ຫ້ອງຮຽນທີ່ມີນັກຮຽນຫຼາຍລະດັບອາຍຸຮ່ວມກັນ: ເອກະສານຂໍ້ມູນສຳລັບພໍ່ແມ່ ແລະ ຜູ້ດູແລ

ຫ້ອງຮຽນແບບປະສົມອາຍຸ (Multi-age classes) ແມ່ນຫຍັງ?

ຫ້ອງຮຽນແບບປະສົມອາຍຸ ແມ່ນຫ້ອງຮຽນທີ່ປະກອບດ້ວຍນັກຮຽນຈາກຫຼາຍລະດັບຊັ້ນຮຽນ. ຫ້ອງຮຽນເຫຼົ່ານີ້ອາດປະກອບດ້ວຍນັກຮຽນທີ່ຢູ່ໃນຊັ້ນທີ່ມີຫຼັກສູດດຽວກັນ ຫຼື ມາຈາກຫຼາຍຊັ້ນທີ່ມີຫຼັກສູດທີ່ແຕກຕ່າງກັນ.

ຫຼັກສູດຂອງ ຣັດ NSW ໄດ້ຖືກຈັດແບ່ງອອກເປັນລະດັບຕ່າງໆ ດັ່ງນີ້:

ລະດັບເລີ່ມຕົ້ນ 1: ຊັ້ນອະນຸບານ

ລະດັບ 1: ປີ 1 ແລະ ປີ 2

ລະດັບ 2: ປີ 3 ແລະ ປີ 4

ລະດັບ 3: ປີ 5 ແລະ ປີ 6

ນັກຮຽນຈະຮຽນຮູ້ຕາມຫຼັກສູດໃນລະດັບທີ່ ເໝາະສົມກັບຕົນເອງ, ບໍ່ວ່າຈະຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາຍລະດັບອາຍຸຮ່ວມກັນ ຫຼື ຫ້ອງຮຽນແບບຊັ້ນປີດຽວກໍຕາມ. ຕົວຢ່າງເຊັ່ນ: ນັກຮຽນຊັ້ນ ປີ 2 ທີ່ຢູ່ໃນຫ້ອງຮຽນລວມລະດັບຊັ້ນ ປີ 1 ແລະ ປີ 2 ຈະຮຽນຕາມຫຼັກສູດຂອງຊັ້ນ ປີ 2 (ລະດັບ 1), ເຊັ່ນດຽວກັນກັບນັກຮຽນຊັ້ນ ປີ 4 ທີ່ຢູ່ໃນຫ້ອງຮຽນລວມຊັ້ນ ປີ 4, 5 ແລະ 6 ກໍຈະຮຽນຕາມຫຼັກສູດຂອງຊັ້ນ ປີ 4 (ລະດັບ 2).

ເປັນຫຍັງໂຮງຮຽນຂອງລູກຂ້ອຍຈຶ່ງອາດມີຫ້ອງຮຽນແບບປະສົມອາຍຸ?

ຫ້ອງຮຽນທີ່ລວມນັກຮຽນທີ່ມີນັກຮຽນຫຼາຍລະດັບອາຍຸຮ່ວມກັນເປັນເລື້ອງປົກກະຕິໃນໂຮງຮຽນຢູ່ອອສເຕຣເລັຍ ແລະ ອາດຖືກຈັດຕັ້ງຂຶ້ນຍ້ອນສາເຫດດັ່ງຕໍ່ໄປນີ້:

- **ຮູບແບບການລົງທະບຽນເຂົ້າຮຽນ** – ຈຳນວນນັກຮຽນໃນແຕ່ລະລະດັບຊັ້ນຮຽນມີການປ່ຽນແປງໃນແຕ່ລະປີ. ຫ້ອງຮຽນທີ່ມີນັກຮຽນຫຼາຍລະດັບອາຍຸຮ່ວມກັນ ຊ່ວຍໃຫ້ໂຮງຮຽນສາມາດຈັດຂະໜາດຂອງຫ້ອງຮຽນໃຫ້ມີຄວາມສົມດຸນກັນໄດ້.
- **ຜົນປະໂຫຍດດ້ານການສຶກສາ** – ໂຮງຮຽນອາດນຳໃຊ້ຮູບແບບການຈັດຫ້ອງຮຽນລັກສະນະນີ້ ເນື່ອງຈາກຜົນປະໂຫຍດທີ່ໄດ້ຮັບທັງດ້ານການຮຽນຮູ້ ແລະ ດ້ານສັງຄົມທີ່ລະບົບນີ້ສາມາດມອບໃຫ້ໄດ້.
- **ໂຮງຮຽນຂະໜາດນ້ອຍ** – ການຈັດຫ້ອງຮຽນແບບປະສົມອາຍຸ ແມ່ນເປັນເລື້ອງປົກກະຕິໃນໂຮງຮຽນຂະໜາດນ້ອຍ ແລະ ໂຮງຮຽນໃນເຂດຊົນນະບົດ, ເຊິ່ງມັນຊ່ວຍໃຫ້ສາມາດຈັດຫ້ອງຮຽນທີ່ມີຈຳນວນນັກຮຽນຄົບຖ້ວນຕາມເກນໄດ້.

CC BY

ມີການຈັດນັກຮຽນເຂົ້າໃນຫ້ອງຮຽນແບບປະສົມອາຍຸ ແນວໃດ?

ທ່ານຄູໃຫຍ່ ແລະ ຄູ ເປັນຜູ້ຕັດສິນໃຈໃນການຈັດຫ້ອງຮຽນໂດຍພິຈາລະນາຈາກ:

- ການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກຮຽນ.
- ການປະສົມປະສານຂອງນັກຮຽນໃນທົ່ວໂຮງຮຽນ.
- ຄວາມສົມດຸນໃນດ້ານຈຸດແຂງ, ຄວາມສົນໃຈ ແລະ ຄວາມຕ້ອງການໃນການຮຽນຮູ້.
- ຄວາມເປັນຢູ່ທີ່ດີທາງສັງຄົມ ແລະ ມິດຕະພາບ.
- ການສິດສອນຕາມຫຼັກສູດຢ່າງມີປະສິດທິພາບ.
- ການຈັດຕຽມການປັບປ່ຽນ ແລະ ການສະໜັບສະໜູນຕ່າງໆໃນທຸກຫ້ອງຮຽນ.

ການຈັດຫ້ອງຮຽນແມ່ນເຮັດຂຶ້ນໂດຍຄຳນຶງເຖິງຜົນປະໂຫຍດສູງສຸດຂອງນັກຮຽນ ເພື່ອສົ່ງເສີມການຮຽນຮູ້. ການຖືກຈັດໃຫ້ຢູ່ໃນຫ້ອງຮຽນແບບປະສົມອາຍຸ **ບໍ່** ໄດ້ໝາຍຄວາມວ່ານັກຮຽນມີລະດັບຄວາມຮູ້ສູງກວ່າ ຫຼື ຕ່ຳກວ່າເກນມາດຕະຖານທີ່ກຳນົດໄວ້ໃນຫຼັກສູດແຕ່ຢ່າງໃດ.

ການຮຽນຮູ້ໃນຫ້ອງຮຽນແບບປະສົມອາຍຸ ເປັນແນວໃດ?

ຄູ ອາຈານຈະວາງແຜນການຮຽນຮູ້ໂດຍອີງຕາມຫຼັກສູດຂອງ ຣັດ NSW ແລະ ປັບປ່ຽນວິທີການສອນເພື່ອໃຫ້ ເໝາະສົມກັບຄວາມຕ້ອງການຂອງນັກຮຽນ. ສິ່ງນີ້ເອີ້ນວ່າ "**ການຈັດການຮຽນຮູ້ທີ່ແຕກຕ່າງຫຼາກຫຼາຍ**" **(differentiation)** ເຊິ່ງເກີດຂຶ້ນໃນທຸກຫ້ອງຮຽນ ເນື່ອງຈາກນັກຮຽນແຕ່ລະ ຄົນມີອັດຕາການຮຽນຮູ້ທີ່ແຕກຕ່າງກັນ.

ໃນຫ້ອງຮຽນແບບປະສົມອາຍຸ, ຄູນຳໃຊ້ວິທີການທີ່ຫຼາກຫຼາຍເພື່ອຊ່ວຍສົ່ງເສີມຄວາມກ້າວໜ້າໃນການຮຽນຮູ້ຂອງນັກຮຽນ. ສິ່ງເຫຼົ່ານີ້ອາດລວມມີ:

- ການສອນນັກຮຽນທັງໝົດໃນຫ້ອງພ້ອມກັນໃນບາງກິດຈະກຳ
- ການເຮັດວຽກເປັນກຸ່ມນ້ອຍໆໃນກິດຈະກຳການຮຽນຮູ້ສະເພາະຢ່າງ
- ການປັບການຮຽນຮູ້ໃຫ້ແຕກຕ່າງກັນ ເພື່ອສ້າງຄວາມທ້າທາຍ ຫຼື ໃຫ້ການ ສະໜັບສະໜູນ
- ການປັບປ່ຽນກິດຈະກຳ, ຊັບພະຍາກອນ ຫຼື ວິທີການທີ່ນັກຮຽນສະແດງໃຫ້ເຫັນເຖິງການຮຽນຮູ້ຂອງພວກເຂົາ.

ຄຳຕອບສຳລັບຄຳຖາມຂອງທ່ານ

ລູກຂອງຂ້ອຍຈະໄດ້ຮັບຄວາມສົນໃຈຈາກຄູໜ້ອຍລົງບໍ?

ຮູບແບບການຈັດຫ້ອງຮຽນບໍ່ໄດ້ເປັນຕົວກຳນົດວ່າ ນັກຮຽນຈະໄດ້ຮັບຄວາມເອົາ ໃຈໃສ່ຫຼາຍໜ້ອຍພຽງໃດ. ຄູຈະວາງແຜນການສອນໂດຍຄຳນຶງເຖິງລະດັບການຮຽນຮູ້ຂອງນັກຮຽນແຕ່ລະຄົນທີ່ແຕກຕ່າງກັນ, ເຊັ່ນດຽວກັນກັບການຈັດການຮຽນການສອນໃນຫ້ອງຮຽນແບບປົກກະຕິທີ່ ຮວມນັກຮຽນໃນລະດັບຊັ້ນດຽວກັນໄວ້ນຳກັນ.

ລູກຂອງຂ້ອຍຈະຕ້ອງໄດ້ເຮັດວຽກຮຽນທີ່ເຄີຍເຮັດມາແລ້ວຊ້ຳອີກບໍ?

ຄູຈະຕິດຕາມຄວາມຄືບໜ້າຂອງນັກຮຽນ ແລະ ວາງແຜນການສອນໃຫ້ ເໝາະສົມ. ນັກຮຽນຈະສືບຕໍ່ຮຽນຮູ້ຕາມຫຼັກສູດທີ່ກ່ຽວຂ້ອງຢ່າງຕໍ່ເນື່ອງ ແລະ ຈະໄດ້ຮັບການສະໜັບສະໜູນເພື່ອໃຫ້ກ້າວໜ້າໄປສູ່ການຮຽນຮູ້ສິ່ງ ໃໝ່ໆ.

ລູກຂອງຂ້ອຍຈະຍັງໄດ້ພົບປະກັບໝູ່ຂອງລາວຢູ່ບໍ?

ໂຮງຮຽນຈະຄຳນຶງເຖິງເລື່ອງມິດຕະພາບລະຫວ່າງໝູ່ເພື່ອນໃນເວລາຈັດຫ້ອງຮຽນ. ນອກຈາກນີ້, ນັກຮຽນຍັງສາມາດພົວພັນກັບໝູ່ຂອງພວກເຂົາໄດ້ໃນຊ່ວງເວລາພັກ ແລະ ໃນລະຫວ່າງກິດຈະກຳຕ່າງໆຂອງໂຮງຮຽນ.

ຫ້ອງຮຽນແບບປະສົມອາຍຸ ຈະສົ່ງຜົນກະທົບຕໍ່ວິທີການສອນລູກຂ້ອຍຫຼືບໍ?

ຄູຈະໃຊ້ວິທີການສອນທີ່ຊັດເຈນ ແລະ ປັບປ່ຽນຮູບແບບການສອນໂດຍອີງໃສ່ການຮຽນຮູ້, ການປະເມີນຜົນ, ຈຸດແຂງ ແລະ ຄວາມຕ້ອງການຂອງນັກຮຽນ. ສິ່ງນີ້ເກີດຂຶ້ນໃນຫ້ອງຮຽນທຸກຮູບແບບ.

ລູກຂອງຂ້ອຍຈະມີໂອກາດໄດ້ຮັບການສົ່ງເສີມການຮຽນຮູ້ເພີ່ມເຕີມ ຫຼື ໄດ້ຮັບບົດຮຽນທີ່ທ້າທາຍຢ່າງເໝາະສົມບໍ?

ໂຮງຮຽນຫຼວງທຸກແຫ່ງໃນ ຣັດ NSW ໃຫ້ການສະໜັບສະໜູນນັກຮຽນທີ່ມີສັກກະຍະພາບສູງ ຫຼື ມີພອນສະຫວັນພິເສດພາຍໃຕ້ນະໂຍບາຍ ການສຶກສາສຳລັບນັກຮຽນທີ່ມີສັກກະຍະພາບສູງ ແລະ ມີພອນສະຫວັນຂອງກະຊວງ. ຄູຈະສັງເກດເບິ່ງຈຸດແຂງຂອງນັກຮຽນ ແລະ ວາງແຜນການຮຽນຮູ້ເພີ່ມເຕີມ ຫຼື ບົດຮຽນຂັ້ນສູງທີ່ເໝາະສົມໃຫ້ສອດຄ່ອງກັບຄວາມສາມາດຂອງພວກເຂົາ. ການດຳເນີນການດັ່ງກ່າວນີ້ມີຂຶ້ນໃນທຸກຮູບແບບຂອງຫ້ອງຮຽນ; ການຈັດໃຫ້ນັກຮຽນຢູ່ໃນຫ້ອງຮຽນແບບປະສົມອາຍຸ ນັ້ນ ບໍ່ໄດ້ເປັນຂໍ້ຈຳກັດຕໍ່ໂອກາດເຫຼົ່ານີ້ແຕ່ຢ່າງໃດ.

ນັກຮຽນທີ່ມີຄວາມພິການໄດ້ຮັບການສະ ໜັບສະໜູນແນວໃດໃນຫ້ອງຮຽນແບບປະສົມອາຍຸ?

ນັກຮຽນທີ່ມີຄວາມພິການໄດ້ຮັບການສະໜັບສະໜູນໃຫ້ມີສ່ວນຮ່ວມຢ່າງເຕັມທີ່ໃນການຮຽນຮູ້ໃນທຸກຫ້ອງຮຽນ, ລວມທັງຫ້ອງຮຽນແບບປະສົມອາຍຸ ບໍ່ວ່າຈະເປັນໃນຫ້ອງຮຽນປົກກະຕິ ຫຼື ຫ້ອງຮຽນສະໜັບສະໜູນພິເສດ. ຄູຈະທຳຄວາມເຂົ້າໃຈຈຸດແຂງ, ຄວາມຕ້ອງການ ແລະ ເປົ້າໝາຍຂອງນັກຮຽນແຕ່ລະຄົນ, ພ້ອມທັງນຳໃຊ້ວິທີການສອນທີ່ຫຼາກຫຼາຍ, ການປັບປ່ຽນທີ່ເໝາະສົມ ແລະ ແຜນການຮຽນຮູ້ ແລະ ການສະໜັບສະໜູນສະເພາະບຸກຄົນ, ເມື່ອມີຄວາມຈຳເປັນ,ເພື່ອຊ່ວຍໃຫ້ນັກຮຽນປະສົບຄວາມສຳເລັດ. ການຕັດສິນໃຈເຫຼົ່ານີ້ແມ່ນເຮັດຮ່ວມກັບນັກຮຽນໃນກໍລະນີທີ່ເໝາະສົມ, ລວມທັງພໍ່ແມ່ ຜູ້ດູແລ, ແລະ ບຸກຄະລາກອນຂອງໂຮງຮຽນທີ່ກ່ຽວຂ້ອງ. ການຈັດໃຫ້ນັກຮຽນເຂົ້າຮຽນໃນຫ້ອງຮຽນແບບປະສົມອາຍຸ ນັ້ນ ບໍ່ໄດ້ປ່ຽນແປງການຈັດຕຽມການໃຫ້ຄວາມຊ່ວຍເຫຼືອສະເພາະບຸກຄົນຂອງນັກຮຽນແຕ່ຢ່າງໃດ.

ຜົນການຄົ້ນຄວ້າລະບຸວ່າແນວໃດ?

ການສິດສອນທີ່ມີຄຸນນະພາບສູງຖືເປັນປັດໄຈຫຼັກພາຍໃນໂຮງຮຽນທີ່ມີອິດທິພົນຕໍ່ການຮຽນຮູ້ຂອງນັກຮຽນ, ໂດຍສົ່ງຜົນກະທົບຫຼາຍກວ່າປັດໄຈດ້ານຂະໜາດຂອງຫ້ອງຮຽນ, ອົງປະກອບຂອງນັກຮຽນໃນຫ້ອງ ຫຼື ຊັບພະຍາກອນດ້ານອື່ນໆ. ຜົນການຄົ້ນຄວ້າຊີ້ໃຫ້ເຫັນວ່າ ນັກຮຽນທີ່ຮຽນໃນຫ້ອງຮຽນແບບປະສົມອາຍຸກັນມີຜົນສຳເລັດທາງການຮຽນທຽບເທົ່າກັບນັກຮຽນໃນຫ້ອງຮຽນແບບລະດັບອາຍຸດຽວກັນ, ຫາກການສິດສອນມີການວາງແຜນທີ່ດີ ແລະ ນັກຮຽນໄດ້ຮັບການສະໜັບສະໜູນທີ່ ເໝາະສົມ. ນອກຈາກນີ້, ຫ້ອງຮຽນແບບປະສົມອາຍຸຍັງຊ່ວຍສົ່ງເສີມໃຫ້ນັກຮຽນພັດທະນາທັກສະການຮ່ວມມື, ຄວາມເຂົ້າອົກເຂົ້າໃຈຜູ້ອື່ນ ແລະ ສ້າງຄວາມສຳພັນທີ່ດີກັບໝູ່ເພື່ອນທີ່ມີອາຍຸ ແລະ ຄວາມສາມາດແຕກຕ່າງກັນ.

ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ, ກະລຸນາໂທຫາທ່ານຄູໃຫຍ່ຂອງໂຮງຮຽນ. ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍໃນການສອບຖາມຂໍ້ມູນ, ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ທີ່ເບີ 131 450 ແລະ ຂໍເອົານາຍພາສາລາວ. ໃຫ້ແຈ້ງເບີໂທລະສັບທີ່ທ່ານຕ້ອງການຕິດຕໍ່ໃຫ້ພະນັກງານຮັບສາຍ, ແລ້ວພະນັກງານຈະເຊື່ອມຕໍ່ນາຍພາສາເຂົ້າມາໃນສາຍເພື່ອຊ່ວຍທ່ານໃນການສົນທະນາ. ທ່ານຈະບໍ່ຖືກຄິດຄ່າບໍລິການນີ້.